ກະຊວງກະສິກຳ ແລະ ປ່າໄມ້
ກົມແແຜນການ ແລະ ການຮ່ວມມື



# ປື້ມຄູ່ມື
# ການຜະລິດເມັດພັນຖົ່ວດິນ

ໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ແບບຍືນຍົງ (ສສຄກປ)

**Sustainable Natural Resource Management and Productivity Enhancement Project (SNRMPEP)**

## ສາລະບານ


**1. ບົດນຳ** ........ 3

**2. ຄວາມຮູ້ພື້ນຖານກ່ຽວກັບຖົ່ວດິນ** ........ 4

**3. ລັກຊະນະທົ່ວໄປຂອງຖົ່ວດິນ** ........ 4

**4. ຂັ້ນຕອນທີ່ສຳຄັນໃນການຜະລິດເມັດພັນຖົ່ວດິນ** ........ 7

4.1 ລະດູການຜະລິດ ........ 7

4.2 ການຄັດເລືອກແນວພັນ ແລະ ເມັດພັນ ........ 7

4.3 ການຄັດເລືອກພື້ນທີ່ ........ 8

4.4 ການກຳນົດໄລຍະຫ່າງຈາກແນວພັນອື່ນ ........ 8

4.5 ການກຽມດິນ ແລະ ການປູກ ........ 9

4.6 ການກຽມເມັດພັນກ່ອນການປູກ ........ 10

4.7 ທາດອາຫານໃນດິນ ........ 11

4.8 ການໃຫ້ນໍ້າ ........ 12

4.9 ການບົວລະບັດຮັກສາ ........ 13

4.10 ການຖອນແຍກຕົ້ນທີ່ປະປົນ ........ 14

4.11 ການເກັບກ່ຽວ ........ 14

4.12 ການຕາກເພື່ອຫຼຸດຄວາມຊຸ່ມ ແລະ ການເກັບຮັກສາ ........ 15

**5. ການກຳນົດມາດຕະຖານຄຸນນະພາບຂອງເມັດພັນຖົ່ວດິນ** ........ 16

**6. ສະຫຼຸບ** ........ 16

## 1. ບົດນຳ

ໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ (ສສຄກປ) ແມ່ນໂຄງການຈຸດສຸມຂອງ ລັດຖະບານທີ່ພະຍາຍາມເສີມຂະຫຍາຍຕົວແບບ ແລະ ຕໍ່ຍອດບັນດາໂຄງການຕ່າງໆທີ່ມີຜົນສຳເລັດສູງຢູ່ໃນບັນດາແຂວງ ທົ່ວປະເທດ ໂດຍສະເພາະຢູ່ 5 ແຂວງ ພາກໃຕ້ ເພື່ອນຳເອົາບັນດາຮູບແບບການປູກ-ການລ້ຽງ ທີ່ມີປະສິດທິຜົນສູງນຳມາເຜີຍແຜ່ອອກສູ່ສັງຄົມຢ່າງກວ້າງຂວາງ. ໂດຍໂຄງການໄດ້ຮັບການຮ່ວມມືຈາກກົມວິຊາການຕ່າງຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການສາກົນຕ່າງໆລວມທັງສ່ວນຜູ້ປະກອບການຜູ້ຜະລິດແນວພັນ ແລະ ອື່ນໆ ເປັນຕົ້ນແມ່ນສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ (ບັນດາສູນຄົ້ນຄວ້າ ແລະ ຜະລິດແນວພັນຕ່າງໆ).

ພວກເຮົາຫວັງວ່າ ການເຜີຍແຜ່ເຕັກນິກ "ການຜະລິດເມັດພັນຖົ່ວດິນ" ສະບັບນີ້ແມ່ນຈະເປັນສ່ວນໜຶ່ງທີ່ຈະຊ່ວຍແນະນຳໃຫ້ວິຊາການ ແລະ ລວມທັງຊາວກະສິກອນທີ່ທຳການຜະລິດກະສິກຳເປັນສິນຄ້າໃຫ້ສາມາດຍົກສູງປະສິດທິພາບຜົນຜະລິດໃຫ້ສູງຂຶ້ນ ແລະ ຫຼຸດຜ່ອນອອກຈາກຄວາມສ່ຽງຜົນເສຍຫາຍດ້ານແນວພັນ, ສັດຕູພືດ ແລະ ການກຽມພ້ອມຮັບມືກັບບັນຫາທີ່ຈະເກີດຂຶ້ນໄດ້ຢ່າງຖືກຕ້ອງ ແລະ ນຳໄປສູ່ການຫຼຸດພົ້ນອອກຈາກຄວາມທຸກຈົນ.

ຄູ່ມືສະບັບນີ້ແມ່ນຜົນງານຂອງການຮ່ວມມືລະຫວ່າງໂຄງການ ສສຄກປ ແລະ ສູນຄົ້ນຄວ້າກະສິກຳນາພອກທີ່ໄດ້ໃຫ້ການສະໜັບທາງດ້ານວິຊາການເຕັກນິກຈົນສາມາດຈັດພິມເຜີຍແຜ່ໄດ້, ການຈັດພິມດັ່ງກ່າວນີ້ແມ່ນບໍ່ສະແຫວງຫາຜົນກຳໄລແຕ່ຢ່າງໃດ ແລະ ບໍ່ອະນຸຍາດໃຫ້ຊື້-ຂາຍ ສ້າງຜົນປະໂຫຍດໃຫ້ແກ່ບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ.

## 2. ຄວາມຮູ້ພື້ນຖານກ່ຽວກັບຖົ່ວດິນ

ເມັດພັນແມ່ນປັດໃຈພື້ນຖານ ແລະ ສຳຄັນສຳລັບການຜະລິດກະສິກຳເປັນສິນຄ້າ ເພາະວ່າຄຸນນະພາບຂອງເມັດພັນມັນເປັນໜຶ່ງໃນປັດໃຈສຳຄັນຕໍ່ກັບຜົນຜະລິດທີ່ຊາວກະສິກອນຈະໄດ້ຮັບ, ການຜະລິດເມັດພັນ ເພື່ອໃຫ້ໄດ້ເມັດພັນທີ່ດີ ມີຄຸນນະພາບ ແລະ ຖືກຕ້ອງຕາມລັກຊະນະປະຈຳພັນນັ້ນ ຈະຕ້ອງໄດ້ມີການຄັດເລືອກເມັດພັນທີ່ບໍລິສຸດ ແລະ ປາດສະຈາກປະປົນຈາກແນວພັນອື່ນ.

ການຜະລິດເມັດພັນຕ້ອງມີການຈັດການໃນການຜະລິດເມັດພັນໃຫ້ເປັນລະບົບ ທຸກຂັ້ນຕອນມີຄວາມສຳຄັນ ແລະ ເອົາໃຈໃສ ເພື່ອປ້ອງກັນການປະປົນຈາກແນວພັນອື່ນ ໂດຍການຜະສົມພັນຂ້າມ ຫຼື ເມັດພັນອື່ນມາປົນ, ການຈັດການຫຼັງການເກັບກ່ຽວ ແລະ ວິທີການເກັບຮັກສາເມັດພັນກໍ່ເປັນຂັ້ນຕອນສຳຄັນເພື່ອຮັບປະກັນຄຸນນະພາບດີ ຈົນເຖິງເວລາທີ່ຊາວກະກອນຈະນຳໄປປູກ.

ຖົ່ວດິນເປັນພືດຕະກຸນຖົ່ວທີ່ຄວາມສຳຄັນໃນຫຼາຍດ້ານເຊັ່ນ ພືດນ້ຳມັນທີ່ສຳຄັນຕໍ່ອຸດສາຫະກຳຜະລິດນ້ຳມັນເພາະມີນ້ຳມັນເຖິງ 48-50% ໃນເມັດພືດ ມີໂປຣຕີອີນ 26-28% ໃນເມັດພືດ ແລະ ຍັງມີທາດອາຫານຫຼາຍຊະນິດລວມທັງເປັນແຫຼ່ງອຸດົມໄປດ້ວຍແຮ່ທາດ ແລະ ວິຕາມິນໃນຖົ່ວເມັດດິນ. ການໃຊ້ປະໂຫຍດຈາກເມັດຖົ່ວດິນສາມາດນຳໃຊ້ໄດ້ຫຼາຍຮູບແບບ ເຊັ່ນເມັດຖົ່ວດິນເອົາໄວ້ກິນໂດຍກົງ, ໃນຮູບແບບຖົ່ວຕົ້ມ, ຖົ່ວຂົ້ວ, ຖົ່ວອົບ, ຖົ່ວຈືນ ຫຼື ເຮັດເປັນເຂົ້າໜົມຕ່າງໆ ແລະ ຍັງສາມາດນຳໄປແປຮູບເປັນ ຜະລິດຕະພັນອື່ນໄດ້ອີກເຊັ່ນ: ເນີຍຖົ່ວດິນ ຫຼື ສະກັດເປັນນ້ຳມັນພືດສຳລັບປຸງແຕ່ງອາຫານ, ສ່ວນກາກຖົ່ວດິນທີ່ສະກັດນ້ຳມັນແລ້ວສາມາດນຳໄປເປັນອາຫານສັດ. ຕົ້ນຖົ່ວດິນທີ່ປົດເອົາຝັກຖົ່ວດິນອອກແລ້ວສາມາດນຳໄປລ້ຽງສັດ ຫຼື ໄຖປົກດິນເພື່ອເປັນປຸ໋ຍບຳລຸງຮັກສາດິນ.

ເນື້ອທີ່ການຜະລິດຖົ່ວດິນໃນ ສປປ ລາວ ມີກວມເອົາ 21,620 ເຮັກຕ້າ, ໃຫ້ຜົນຜະລິດລວມ 46,022 ໂຕນສະເລ່ຍສະມັດຕະພາບຖົ່ວປະເທດ 2.32 ໂຕນ/ເຮັກຕ້າ, ໃນນັ້ນ ແຂວງສາລະວັນ ເປັນແຂວງທີ່ຜະລິດຖົ່ວດິນຫຼາຍທີ່ສຸດຄື 6,605 ເຮັກຕ້າ ສະມັດຕະພາບຜົນຜະລິດ 1.93 ໂຕນ/ເຮັກຕ້າ ແຂວງທີ່ໃຫ້ສະມັດຕະພາບສູງທີ່ສຸດແມ່ນ ແຂວງບໍລິຄຳໄຊ 3.31 ໂຕນ/ເຮັກຕ້າ (ຂໍ້ມູນສະຖິຕິປະຈຳປີ 2012, ກົມປູກຝັງ), ຈາກຂໍ້ມູນສະຖິຕິສະແດງໃຫ້ເຫັນວາສະມັດຕະພາບຂອງແຕ່ລະພື້ນທີ່ມີຄວາມແຕກຕ່າງກັນຍ້ອນຫຼາຍປັດໃຈ ໜຶ່ງໃນປັດໃຈສຳຄັນກໍ່ຄືເມັດພັນ ຫຼາຍພື້ນທີ່ແມ່ນເກັບເມັດພັນຂອງຕົນເອງໄວ້ໃຊ້ໃນລະດູຕໍ່ໄປ ໃນການເກັບເມັດພັນນັ້ນກໍ່ບໍ່ມີການຄັດເລືອກເມັດດີ ແລະ ແຍກເມັດປົນອອກ ຫຼື ເມັດທີ່ບໍ່ໄດ້ຄຸນນະພາບອອກ ເຮັດໃຫ້ເວລາປູກຈະບໍ່ໄດ້ຮັບຜົນເທົ່າທີ່ຄວນ, ຈາກພື້ນທີ່ການຜະລິດທົ່ວປະເທດເຫັນວ່າປະລິມານເມັດພັນທີ່ຊາວກະສິກອນຜູ້ມີຄວາມຕ້ອງການຫຼາຍກວ່າ 1,300 ໂຕນ ໂດຍສະເພາະແຂວງສາລະວັນມີຄວາມຕ້ອງການເມັດພັນເຖິງ 400 ໂຕນຕໍ່ລະດູການ (ຂໍ້ມູນສະຖິຕິປະຈຳປີ 2012,ກົມປູກຝັງ).

ບໍລິສັດເມັດພັນຂອງເອກະຊົນຍັງບໍ່ໃຫ້ຄວາມສົນໃຈໃນການຜະລິດເມັດພັນຖົ່ວດິນເນື່ອງຈາກຂັ້ນຕອນການຜະລິດທີ່ມີຂໍ້ຫຍຸ້ງຍ້າກຫຼາຍດ້ານ ແລະ ຜົນຕອບແທນຍັງບໍ່ສູງຖ້າທຽບໃສພືດອື່ນ ປະຈຸບັນມີພຽງສູນຄົ້ນຄວ້າກະສິກຳຂອງພາກລັດທີ່ສະໜອງເມັດພັນແຕ່ຍັງບໍ່ທັນຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການຂອງຜູ້ຜະລິດ. ດັ່ງນັ້ນ, ເພື່ອຕອບສະໜອງເມັດພັນໃຫ້ພຽງກັບຄວາມຕ້ອງການຂອງຊາວກະສິກອນ ທາງໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ແບບຍືນຍົງ (ສສຄກປ) ຈຶ່ງໄດ້ຈັດຕັ້ງກຸ່ມຜູ້ຜະລິດເມັດພັນຖົ່ວດິນຂຶ້ນ ເພື່ອຕອບສະໜອງແນວພັນທີ່ຕະຫຼາດມີຄວາມຕ້ອງການ ແລະ ເປັນເມັດພັນທີ່ດີ ມີຄຸນນະພາບໃຫ້ກັບຊາວກະສິກອນເພື່ອຜະລິດເປັນສິນຄ້າ.

## 3. ລັກຊະນະທົ່ວໄປຂອງຖົ່ວດິນ

ຖົ່ວດິນ (*Arachis hyogaea* L.) ແມ່ນນອນໃນພືດຕະກຸນຖົ່ວ (*Leguminosae*) ເປັນພືດປະສົມພັນດ້ວຍໂຕເອງ ແຕ່ບາງພື້ນທີ່ທີ່ມີ ເຜິ້ງຫຼາຍກໍ່ມີໂອກາດປະສົມພັນຂ້າມໄດ້ ແຕ່ເປີເຊັ່ນຕໍ່າ. ຖົ່ວດິນເປັນພືດລົ້ມລຸກ ທີ່ມີຄວາມສູງປະມານ 40-50 ຊັງ

ຕິເມັດ ອາຍຸຕັ້ງແຕ່ປູກຫາເກັບກ່ຽວປະມານ 90-150 ວັນ ຂຶ້ນກັບຊະນິດພັນ ແລະ ລະດູປູກ. ມີດ້ອກສີເຫຼືອງ ອອກດອກເມື່ອອາຍຸປະມານ 30-40 ວັນ, ດອກສົມບູນ (ເພດຜູ້ ແລະ ເພດແມ່ໃນດອກດ່ຽວ) ຫຼັງຈາກປະສົມພັນແລ້ວ ຈະພັດທະນາເປັນເຂັມແທງລົງດິນ ເມື່ອແທງດິນແລ້ວປາຍເຂັມຈະຂະຫຍາຍຕົວກາຍເປັນຝັກ ແຕ່ວ່າຖ້າເຂັມບໍ່ສາມາດ ແທງລົງດິນໄດ້ມັນກໍ່ຈະບໍ່ສາມາດພັດທະນາກາຍເປັນຝັກ ໃນໜຶ່ງຝັກກໍ່ຈະມີເມັດປະມານ 1-4 ເມັດ ຂະໜາດເມັດມີແຕ່ ນ້ອຍຫາໃຫຍ່ ແລະ ສີເປືອກຫຸ້ມເມັດຫຼາຍສີ ທຸກລັກຊະນະນີ້ແມ່ນຂຶ້ນກັບແຕ່ລະຊະນິດພັນ.

ຮູບ 1 ລັກຊະນະຝັກປາຍເປັນສົບນົກ




ຮູບ 2 ລັກຊະນະຝັກມີຂອດທາງກາງ




ຮູບ 3 ລັກຊະນະເປືອກເປັນຕາໜາງ




ຮູບ 4 ລັກຊະນະເປືອກເປັນຮອງ



ຮູບ 5 ຈຳນວນເມັດຕໍ່ຝັກ



ຮູບ 6 ສີຂອງເມັດ




ຮູບ 7 ລັກຊະນະຂອງເມັດ




ຮູບ 8 ຂະໜາດຂອງເມັດ




**ການຈຳແນກປະເພດພັນຂອງຖົ່ວດິນທີ່ມີການປູກແຜ່ຫຼາຍມີ 3 ປະເພດຄື**

1. ປະເພດສະເປນນິດ (Spanish ຫຼື var. *vulgaris*) ເປັນປະເພດພັນທີ່ມີຂະໜາດໃບໃຫຍ່ ໃບເປັນສີຂຽວອ່ອນ, ອອກດອກຕາມຂໍ້ຂອງລຳຕົ້ນຫຼັກ ກິ່ງຂະແໜງບໍ່ຄ່ອຍອອກດອກ ໃນໜຶ່ງຝັກສ່ວນຫຼາຍມີ 2 ເມັດ ຂະໜາດເມັດຈະນ້ອຍຫາປານກາງ
2. ປະເພດວາເລັນເຊຍ (Valensia ຫຼື var. *fastigiata*) ຖົ່ວດິນປະເພດນີ້ຈະມີລັກຊະນະໂດຍລວມຄືປະເພດສະເປນນິດ ແຕ່ໃນໜຶ່ງຝັກຈະມີ 3-4 ເມັດ ຂະໜາດເມັດຈະນ້ອຍຫາປານກາງ
3. ປະເພດເວີຈິເນຍ (Virginia ຫຼື var. *hypogae*) ຖົ່ວດິນປະເພດນີ້ຈະມີ ຂະໜາດຂອງໃບນ້ອຍ ແລະ ສີຂຽວເຂັ້ມກວ່າ 2 ປະເພດທຳອິດ, ດອກຈະອອກທຸກ 2 ຂໍ້ ສະລັບກັບ 2 ຂໍ້ທີ່ແຕກອອກເປັນກິ່ງ ການຕິດຝັກຈະກະຈາຍ ບໍ່ຄື 2

ປະເພດທຳອິດທີ່ຕິດຝັກຢູ່ເຫງົ້າຫຼາຍ. ໃນໜຶ່ງຝັກມີ 2 ເມັດ ແລະ ເມັດໃຫຍ່ ບາງແນວພັນເມັດໃຫຍ່ກວ່າ 2 ປະເພດທຳອິດ ເມັດມີການຝັກໂຕ (Seed dormancy) ໝາຍວ່າການແຕກງອກຈະຊ້າໜ່ອຍໜຶ່ງເມື່ອທຽບກັບ 2 ປະເພດທຳອິດ ແລະ ອາຍຸເກັບກ່ຽວແມ່ນແຕ່ປານກາງຈົນເຖິງການຈະເລີນເຕີບໂຕເຕັມທີ່ (late maturity)

## 4. ຂັ້ນຕອນທີ່ສຳຄັນໃນການຜະລິດເມັດພັນຖົ່ວດິນ

4.1 ລະດູການຜະລິດ

ໃນເງື່ອນໄຂສະພາບແວດລ້ອມໃນບາງພື້ນທີ່ຂອງປະເທດລາວມີຄວາມເໝາະສົມສາມາດປູກຖົ່ວດິນໄດ້ສອງລະດູ ຄື

- ລະດູແລ້ງແມ່ນເລີ້ມແຕ່ເດືອນ ທັນວາ ຫາ ເດືອນມີນາ ການປູກລະດູແລ້ງສ່ວນໃຫຍ່ແມ່ນປູກໃນເຂດທີ່ມີລະບົບຊົນລະປະທານ ປູກໃສ່ນາເຂົ້າຫຼັງຈາກເກັບກ່ຽວແລ້ວ
- ຕົ້ນລະດູຝົນເລີ້ມແຕ່ເດືອນມິຖຸນາ ເຖິງ ເດືອນກັນຍາ ບາງທ້ອງຖິ່ນຖ້າຝົນມາໄວກໍ່ສາມາດປູກກ່ອນເດືອນມິຖຸນາໄດ້
- ທ້າຍລະດູຝົນ ຫຼື ເອີ້ນວ່າປູກຕາວ ເຂດທີ່ເໝາະສົມແມ່ນເຂດພູພຽງບໍລະເວນເນື່ອງຈາກເຂດນີ້ທ້າຍລະດູຝົນຈະແກ່ຍາວເຖິງເດືອນຕຸລາ ແລະ ເປັນເຂດທີ່ມີຄວາມຊຸມສູງຈິງເໝາະສົມ ຖ້າພື້ນທີ່ໃດທ້າຍລະດູຝົນໝົດໄວກໍ່ບໍ່ແນະນຳໃຫ້ປູກ ຍົກເວັ້ນຖ້າມີລະບົບຊົນລະປະທານ ການປູກຕາວຄວນຈະປູກທ້າຍເດືອນສິງຫາ ແລະ ເກັບກ່ຽວຕົ້ນເດືອນທັນວາ

ແຕ່ລະລະດູປູກຄວນເລືອກແນວພັນທີ່ມີອາຍຸເກັບກ່ຽວໃຫ້ເຫດເໝາະສົມກັບສະພາບແວດລ້ອມໂດຍສະເພາະປະລິມານນ້ຳຝົນທີ່ຕົກໃນເຂດນັ້ນໆ (ຖ້າຫາກເປັນເຂດບໍ່ມີຊົນລະປະທານ) ໂດຍສະເພາະໄລຍະຈະເລີນເຕີບໂຕແມ່ນມີຄວາມຕ້ອງການນ້ຳຫຼາຍ ແລະ ຈະຫຼຸດລົງຈົນຮອດເກັບກ່ຽວ

4.2 ການຄັດເລືອກແນວພັນ ແລະ ເມັດພັນ

- ການຄັດເລືອກແນວພັນຄວນປູກພັນທີ່ມີຄວາມຕ້ອງການຂອງຕະຫຼາດທ້ອງຖິ່ນ ແລະ ເປັນພັນທີ່ໃຫ້ຜົນຜະລິດດີ ສາມາດປັບຕົວເຂົ້າກັບສະພາບແວດລ້ອມຂອງທ້ອງຖິ່ນນັ້ນເປັນຢ່າງດີ



- ຄວນຄັດເລືອກເອົາເມັດພັນທີ່ໄດ້ຮັບການຮັບຮອງ ຈາກໜ່ວຍງານທີ່ ເຊື່ອຖືໄດ້
- ໂດຍພື້ນຖານຄວນເປັນເມັດພັນທີ່ມີອາຍຸໃນການເກັບຮັກສາບໍ່ຄວນເກີນ 6 ເດືອນ ແລະ 1 ປີ (ຖ້າເກັບໃນ ສາງເຢັນ) ເພາະຖົ່ວດິນເປັນພືດນ້ຳມັນ, ຖ້າເກັບໄວ້ດົນອັດຕາການຄວາມງອກຫຼຸດລົງ ໂດຍສະເພາະໃນເຂດພູມອາກາດມີຄວາມຮ້ອນຊຸ່ມ ແລະ ຈະເຮັດໃຫ້ອັດຕາການງອກຫຼຸດລົງຫຼາຍ.
- ລັກສະນະຂອງເມັດ ແລະ ສີເມັດຄວນມີຄວາມສະໝໍ່າສະເໝີ ມີຄວາມບໍລິສຸດ (ບໍ່ມີຕຳນິ) ຂອງເມັດພັນຫຼາຍກວ່າ 96% ແລະ ເປີເຊັນຄວາມງອກ ຕ້ອງຫຼາຍກວ່າ 70%

- ເມັດພັນຄວນຈະປະສົມຢາປ້ອງກັນເຊື້ອລາ ແລະ ແມງໄມ້ເພື່ອປ້ອງກັນບໍ່ໃຫ້ເຂົ້າໄປທຳລາຍ ຈາວຖົ່ວດິນເພາະເປັນສາເຫດເຮັດໃຫ້ເປີເຊັນຄວາມງອກຕໍ່າ, ເຮັດໃຫ້ຕົ້ນກ້າອ່ອນແອ່ ແລະ ເຮັດໃຫ້ການຈະເລີນເຕີບໂຕບໍ່ສະໝໍາສະເໝີ

ຮູບທີ່ 9: ລັກຊະນະເມັດທີ່ສົມບູນທີ່ຄວນຈະເລືອກເປັນແນວພັນ

4.3 ການຄັດເລືອກພື້ນທີ່

- ພື້ນທີ່ຜະລິດເມັດພັນຄວນຈະເປັນເຂດທີ່ສະອາດປາດສະຈາກພະຍາດ ແລະ ແມງໄມ້ ຄວນຈະເປັນດິນທີ່ສາມາດລະບາຍນໍ້າໄດ້ດີ ແລະ ມີທາດອາຫານທີ່ອຸດົມສົມບູນ ມີຄ່າຄວາມເປັນກົດເປັນດ່າງ (pH) ປະມານ 6-6.5.
- ບໍ່ຄວນເປັນພື້ນທີ່ທີ່ເຄີຍຜະລິດຖົ່ວດິນມາກ່ອນເພາະພື້ນທີ່ດັ່ງກ່າວຈະເປັນບ່ອນສະສົມຂອງພະຍາດ ແມງໄມ້ ແລະ ເມັດພັນ ອື່ນທີ່ຕົກຄ້າງໃນດິນ ເຊິ່ງມັນ ຈະເປັນສາຍເຫດເຮັດໃຫ້ມີເມັດພັນປະປົນໄດ້,ຖ້າບໍ່ສາມາດປ່ຽນພື້ນທີ່ ໃໝ່ ກໍ່ຄວນໄຖແລ້ວຫົດນໍ້າປະໃຫ້ເມັດຕົກຄ້າງ ຫຼື ປະປົນງອກແລ້ວຖອນຖິ້ມ ຫຼື ໄຖກົບ ເຮັດແບບເກົ່າຈັກ 2-3 ຄັ້ງເພື່ອກໍາຈັດເມັດຕົກຄ້າງ ຫຼື ຄວນປູກພັນ ດຽວກັບພັນທີ່ປູກໃນພື້ນທີ່ເກົ່າຂອງລະດູຜ່ານມາ.
- ບໍ່ຄວນປູກຊໍ້າໃນພື້ນທີ່ເກົ່າຫຼາຍຄັ້ງ ຄວນຈະປູກພືດອື່ນໃນພື້ນທີ່ນັ້ນແລ້ວຈຶ່ງປູກຖົ່ວດິນໃນລະດູຕໍ່ໄປ, ວິທີນີ້ຈະຊ່ວຍຫຼຸດຜ່ອນການສະສົມຂອງພະຍາດ ແລະ ແມງໄມ້ໄດ້.

ຮູບທີ່ 10 ພື້ນທີ່ປູກຖົ່ວດິນໃນແປງທີ່ເຄີຍປູກຖົ່ວຂຽວໃນລະດູຜ່ານມາ ເຊິ່ງເຫັນໄດ້ວ່າຍັງມີເມັດຖົ່ວຂຽວຕົກຄ້າງແລະ ງອກໃນລະດູຕໍ່ມາ, ສະນັ້ນ ບໍ່ຄວນໃຊ້ເປັນແປງຜະລິດເມັດພັນຖົ່ວດິນເພາະມັນຈະເຮັດໃຫ້ເກີດເມັດພັນປົນໄດ້.



4.4 ການກໍານົດໄລຍະຫ່າງຈາກແນວພັນອື່ນ

- ໂດຍລັກສະນະຂອງຖົ່ວດິນເປັນພືດປະສົມພັນດ້ວຍຕົວເອງ (ໃນຕົ້ນດຽວກັນ) ມີດອກເພດຜູ້ ແລະ ເພດແມ່ ໃນດອກດຽວກັນ, ດັ່ງນັ້ນໂອກາດການປະສົມຂ້າມຂ້ອນຂ້າງຕໍ່າ. ເຖິງແນວໃດກໍ່ຕາມຖ້າຫາກໃນເຂດນັ້ນ ມີເຜິ້ງຫຼາຍກໍ່ມີໂອກາດປະສົມພັນຂ້າມຕົ້ນໄດ້ຕາມທໍາມະຊາດຂອງແຕ່ລະແນວພັນ ແລະ ລະດູປູກ.
- ການຜະລິດເມັດພັນມັນມີຄວາມຈໍາເປັນທີ່ຈະຕ້ອງເຮັດໃຫ້ພື້ນທີ່ການຜະລິດປອດການປະສົມພັນຂ້າມໄດ້ ຕາມມາດຕະຖານຂອງສາກົນໄດ້ກໍານົດໄວ້ວ່າ ໄລຍະຫາງລະຫວ່າງ 2 ແນວພັນຄວນຫ່າງກັນຢ່າງໜ້ອຍ 15 ແມັດ, ຖ້າຜະລິດເມັດພັນລຸ້ນໜຶ່ງຈະຕ້ອງຫ່າງກັນ 30 ແມັດ ລະຫວ່າງ 2 ແນວພັນ.

4.5 ການກຽມດິນ ແລະ ການປູກ

- ການກຽມດິນຄວນໄຖຄາດໃຫ້ດິນຜຸຜຸ່ຍເພື່ອໃຫ້ນໍ້າລະບາຍໄດ້ດີ
- ສໍາຫຼັບການກະກຽມດິນໃນເຂດພື້ນທີ່ໆບໍ່ຮົກເຮື້ອ ໃຫ້ໄຖເປັນຮ່ອງແລ້ວຢອດເມັດໄດ້ເລີຍ, ແຕ່ສໍາຫຼັບເຂດພື້ນທີ່ຮົກເຮື້ອຈໍາເປັນຕ້ອງໄດ້ກະກຽມດິນໂດຍໄຖ 1 ຄັ້ງ ແລ້ວຕາກດິນໄວ້ 7-10 ມື້ ເພື່ອເຮັດໃຫ້ແກ່ນຫຍ້າ ແລະ ໄຂ່ແມງໄມ້ຕ່າງໆຕາຍ. ຫຼັງຈາກນັ້ນໃຫ້ໄຖພວນດິນອີກ 1 ຄັ້ງແລ້ວຄາດເພື່ອເກັບເສດຮາກໄມ້ ແລະ ວັດຊະພືດອອກຈາກພື້ນທີ່ປູກ.
- ສໍາລັບພື້ນທີ່ຕໍ່າມີນໍ້າໄຕ້ດິນຕື້ນ ຫຼື ນໍ້າຂັງຄວນຈະຍົກເປັນຄູ ເພື່ອບໍ່ໃຫ້ນໍ້າຂັງເພາະຈະເຮັດໃຫ້ການແຕກງອກບໍ່ດີເນື່ອງຈາກເມັດເນົ່າຢູ່ໃນດິນ.
- ໄລຍະຫາງລະຫວ່າງແຖວປະມານ 30-50 ຊັງຕີແມັດ (30 ຊັງຕີແມັດ ຄວນຈະປູກໃນລະດູແລ້ງ ແຕ່ວ່າບ່ອນທີ່ໃຫ້ນໍ້າເປັນຄອງອາດຈະປູກກວ້າງກວ່າ 30 ຊັງຕີແມັດ ແລະ 50 ຊັງຕີແມັດ ແມ່ນປູກໃນລະດູຝົນ ແລະ ເປັນດິນທີ່ອຸດົມສົມບູນ) ໄລຍະຫາງລະຫວ່າງຕົ້ນ 15-20 ຊັງຕີແມັດ ຄວນໃສ່ 2-3 ເມັດ/ຂຸມ.
- ໃນເນື້ອທີ່ 1 ເຮັກຕ້າຄວນໃຊ້ ເມັດພັນ ປະມານ 80-120 ກິໂລກຣາມ ຂຶ້ນກັບຂະໜາດຂອງເມັດ ຖ້າພັນເມັດໃຫຍ່ ອາດຈະໃຊ້ຫຼາຍເຖິງ 130 ກິໂລກຣາມ/ເຮັກຕ້າ ຫຼັງຈາກແຕກງອກໄດ້ 7-10 ວັນໃຫ້ຖອນແຍກໂດຍໃຫ້ເຫຼືອຂຸມລະ 1-2 ຕົ້ນ.

ຮູບ11: ໄລຍະຫ່າງຂອງແຖວ ແລະ ຕົ້ນ.




ຮູບທີ່ 12 ການປູກດ້ວຍຄົນ ແລະ ເຄື່ອງຈັກ



*Manual sowing of groundnut.*　　*Tractor-drawn machine sowing of groundnut.*

4.6 ການກຽມເມັດພັນກ່ອນການປູກ

- ການເລືອກເມັດພັນມາປູກຄວນເລືອກເມັດພັນທີ່ມາຈາກຕົ້ນທີ່ມີລັກຊະນະຖືກຕ້ອງຕາມພັນເດີມ ແລະ ເປັນເມັດໃຫມ່ມີເປີເຊັນຄວາມງອກດີ
- ເມັດພັນທີ່ໄດ້ຄຸນນະພາບດີຄືເມັດທີ່ໄດ້ຈາກການແກະມື ຖ້າແກະດ້ວຍເຄື່ອງສີເມັດມັນຈະເຮັດໃຫ້ເປືອກຫຸ້ມຫຼູດອອກ ຫຼືເມັດແຕກຢູ່ດ້ານໃນ ເຮັດໃຫ້ການແຕກງອກບໍ່ດີ ຫຼື ຕົ້ນກ້າບໍ່ແຂງແຮງຈະເລີນເຕີບໂຕບໍ່ທັນໝູ່

- ມີບາງແນວພັນຈະມີການພັກໂຕຂອງເມັດພັນ (ຈະບໍ່ແຕກງອກຫຼັງຈາກເກັບເມັດມາໃໝ່) ຄວນເອົາໃຈໃສ່ຄື: ຄວນເກັບເມັດພັນໄວ້ໃນບ່ອນທີ່ແຫ້ງມີອາກາດຖ່າຍເທໄດ້ດີປະມານ 2 ເດືອນ ຈຶ່ງນໍາໄປປູກ ແຕ່ຖ້າຕ້ອງການປູກທັນທີ່ ແມ່ນຫຼັງຈາກແກະເປືອກແລ້ວໃຫ້ ຕາກແດດ ຫຼື ອົບດ້ວຍຄວາມຮ້ອນ 50 ອົງສາເຊ ເປັນເວລາ 3 ວັນ ແລ້ວຈຶ່ງນໍາໄປປູກ.



ຮູບທີ່ 13: ການແກະເປືອກເມັດແນວພັນຖົ່ວດິນດ້ວຍມື

- ກ່ອນປູກຄວນຈະປະສົມເມັດພັນ ເຂົ້າກັບ ຂີ້ເຖົ່າ ຫຼື ສານເຄມີ ເພື່ອປ້ອງກັນການເກີດ ເຊື້ອຣາ ແລະ ແມງໄມ້ທໍາລາຍເມັດ ໂດຍສະເພາະຈໍາພວກ ມົດ ແລະ ປວກ.
- ພື້ນທີ່ທີ່ບໍ່ເຄີຍປູກຖົ່ວດິນມາກ່ອນ ຫຼື ພືດຕະກຸນຖົ່ວຊະນິດອື່ນເຊັ່ນ ຖົ່ວເຫຼືອງ, ຖົ່ວຂຽວ, ຖົ່ວດໍາ, ຖົ່ວແດງ ແລະ ອື່ນໆ ຄວນຈະປະສົມເມັດພັນດ້ວຍ ເຊື້ອໄຮໂຊບຽມ ກ່ອນປູກເພື່ອຊ່ວຍໃນການສ້າງຈຸລິນຊີໃນດິນ ໃນການດຶງທາດໄນໂຕເຈັນໃນອາກາດໃຫ້ກາຍເປັນທາດອາຫານໃຫ້ກັບຕົ້ນຖົ່ວ ແລະ ຍັງເຫຼືອໄວ້ໃນດິນເພື່ອປູກພືດອື່ນໃນລະດູຕໍ່ໄປ.

4.7 ທາດອາຫານໃນດິນ

- ຖົ່ວດິນຈະເລີນເຕີບໂຕ ແລະ ໃຫ້ຜົນຜະລິດສູງໃນດິນທີ່ມີອິນຊີວັດຖຸສູງ ການໃສ່ຝຸ່ນວິທະຍາສາດກໍ່ຊ່ວຍໃນການເພີ່ມຜົນຜະລິດ. ປະລິມານການໃສ່ຝຸ່ນວິທະຍາສາດແມ່ນຂຶ້ນກັບຄວາມອຸດົມສົມບູນຂອງແຕ່ລະພື້ນທີ່ ຖ້າພື້ນທີ່ໃດມີຄວາມອຸດົມສົມບູນພຽງພໍກັບຄວາມຕ້ອງການຂອງພືດກໍ່ຈະບໍ່ໃສ່ຝຸ່ນວິທະຍາສາດເພື່ອຫຼຸດຕົ້ນທຶນການຜະລິດ, ແຕ່ພື້ນທີ່ໃດຫາກຂາດທາດອາຫານກໍ່ຈໍາເປັນຕ້ອງໃສ່ ແລະ ອາດຈະຕ້ອງໃສ່ຫຼາຍກວ່າບ່ອນອື່ນໆ ເພື່ອໃຫ້ການຈະເລີນເຕີບໂຕຂອງຖົ່ວບໍ່ຢຸດສະຫງັກ ແລະ ໃຫ້ຜົນຜະລິດດີ.

- ທາດໄນໂຕເຈັນ (N) ແມ່ນມີຄວາມຈຳເປັນໃນໄລຍະເປັນຕົ້ນກ້າເພື່ອການຈະເລີນເຕີບໂຕ, ຫຼັງຈາກນັ້ນຕົ້ນຖົ່ວດິນຈະສາມາດດຶງໄນໂຕເຈັນ (N) ໄດ້ເອງ. ຖົ່ວດິນ ແລະ ພືດຕະກຸນຖົ່ວອື່ນ ແມ່ນຕ້ອງການທາດໄນໂຕເຈັນ (N) ແລະ ໂປຕັດຊຽມ (K) ໜ້ອຍ ແຕ່ມີຄວາມຕ້ອງການຫຼາຍໃນທາດ ຟອດສະຟໍຣັດ (P) ສ່ວນປະກອບຂອງທາດອາຫານທີ່ແນະນຳຂອງ 3 ຊະນິດ (N:P:K) 1:3:2 ຫຼື 1:3:1 ຫຼື 1:2:1 ເຊັ່ນຝຸ່ນເຄມີສູດ 3-9-6 ສຳລັບດິນທີ່ຄ່ອນຂ້າງມີຄວາມອຸດົມສົມບູນ, 6-18-6 ສຳລັບດິນທີ່ມີຄວາມອຸດົມສົມບູນປານກາງ ແລະ 12-24-12 ສຳລັບດິນທີ່ມີຄວາມອຸດົມສົມບູນຕ່ຳ. ແຕ່ແນວໃດກໍ່ຕາມ ມັນເປັນການຍາກທີ່ຊາວກະສິກອນຈະປະສົມຝຸ່ນເຄມີໃຫ້ໄດ້ຕາມສູດນີ້ ສະນັ້ນ ຈຶ່ງແນະນຳໃຫ້ໃຊ້ຝຸ່ນສຳເລັດຮູບທີ່ມີຂາຍຕາມທ້ອງຕະຫຼາດທີ່ມີສູດໃກ້ຄຽງກັບສູດແນະນຳເຊັ່ນຮອງພື້ນດ້ວຍສູດ 16-20-0 ອັດຕາ 300 ກິໂລກຣາມ/ຮຕ ຫຼື 15-15-15 ອັດຕາ 250-300 ກິໂລກຣາມ/ຮຕ ແລ້ວເສີມດ້ວຍຝຸ່ນ ຟອດສະຟໍຣັດ (P), ອາດຈະໃຫ້ທາດອາຫານເສີມບາງຊະນິດທາງໃບ ຂຶ້ນກັບການສະແດງອາການຈາກພືດ ຕ້ອງພິຈາລະນາຕົວຈິງ ເພາະການໃສ່ຝຸ່ນແຕ່ລະຄັ້ງແມ່ນການເພີ່ມຕົ້ນທຶນການຜະລິດ.
- ສຳລັບທາດອາຫານອື່ນແມ່ນບໍ່ຄ່ອຍຂາດ ຍົກເວັ້ນດິນທີ່ມີຄວາມເປັນດ່າງສູງ ຖົ່ວດິນຈະມັກສະແດງອາການຂາດທາດເຫຼັກຢ່າງຮຸນແຮງ ແລະ ຄວນລີກລ້ຽງພື້ນທີ່ດັ່ງກ່າວ.

ຮູບທີ່ 14: ບໍລິເວນປຸ່ຍໃນໂຄນຕົ້ນຂອງໝາກຖົ່ວດິນ

4.8 ການໃຫ້ນ້ຳ



- ຖ້າປູກໃນລະດູຝົນຈະບໍ່ຄ່ອຍມີບັນຫາເລື່ອງຄວາມຊຸ່ມສຳລັບການແຕກງ້ອກ ແຕ່ຖ້າປູກໃນລະດູແລ້ງຄວນຫົດນ້ຳທັນທີ່ຫຼັງຈາກຍອດເມັດ ແລະ ຄວນໃຫ້ນ້ຳຄັ້ງຕໍ່ໄປທຸກໆ 7 ວັນ ເປັນຢ່າງໜ້ອຍ ຖົ່ວດິນມີຄວາມຕ້ອງການນ້ຳຫຼາຍໃນໄລຍະອອກດອກ ແລະ ອາຍຸໄດ້ 2 ເດືອນ ຫຼັງຈາກນັ້ນຄວາມຕ້ອງການຄວາມຊຸ່ມກໍ່ຈະຫຼຸດລົງ.
- ການໄດ້ຮັບນ້ຳພຽງພໍ່ມັນຈະສະແດງອອກໃນການຈະເລີນເຕີບໂຕຂອງຕົ້ນຖົ່ວມີຄວາມສະໜ່ຳສະເໝີ ແລະ ຜົນຜະລິດສູງ.
- ການໄດ້ຮັບຄວາມຊຸ່ມບໍ່ພຽງພໍໃນໄລຍະຈະເລີນເຕີບໂຕ (ກ່ອນອອກດອກ ຫຼື ປະມານ 3-4 ອາທິດຫຼັງຈາກແຕກງອກ) ຈະມີຜົນກະທົບຫຼາຍຕໍ່ຜົນຜະລິດ ແຕ່ຈະເຮັດໃຫ້ການຂະຫຍາຍຕົວຂອງກິ່ງງ່າບໍ່ດີເທົ່າທີ່ຄວນ, ແຕ່ວ່າໄລຍະອອກດອກຄວນຈະມີຄວາມຊຸ່ມທີ່ພຽງພໍຢູ່ໃນດິນ ຖ້າບໍ່ດັ່ງນັ້ນຈະເຮັດໃຫ້ຢັບຢັ້ງການບານຂອງດອກ ແລະ ໂຄງສ້າງຂອງດອກ, ເມື່ອໃນດິນມີຄວາມຊຸ່ມທີ່ເໝາະສົມຈະເຮັດໃຫ້ການແທງເຂັມ (ປາຍຮາກ)ລົງດິນ ແລະການຂະຫຍາຍຕົວຂອງຝັກໄດ້ດີ (ໄລຍະປະມານ 50-60 ມື້ຫຼັງຈາກປູກ) ໂດຍສະເພາະບໍລິເວນອ້ອມເຂັມແທງລົງນັ້ນ (ຈາກໜ້າດິນລົງປະມານ 8-12 ຊັງຕີແມັດ) ຄວນໃຫ້ດິນມີຄວາມຊຸ່ມ ເຊິ່ງສາມາດໃຫ້ນ້ຳໃນປະລິມານໜ້ອຍ ແຕ່ໃຫ້ເລີຍໆ.
- ຄວາມຊຸ່ມຂອງດິນໃນບໍລິເວນໃກ້ກັບການສ້າງຝັກນັ້ນມັນຈະຊ່ວຍການດູດຊຶມທາດ ແຄນຊຽມ (Ca) ໄດ້ດີເຊິ່ງຈະມີຄຸນປະໂຫຍດຫລາຍຕໍ່ການຂະຫຍາຍຕົວຂອງຝັກ ແລະ ເມັດ. ຖ້າຄວາມຊຸ່ມໃນດິນບໍ່ພຽງພໍໃນໄລຍະນີ້ມັນຈະມີຜົນຕໍ່ການສຸກແກ່ ແລະ ຂາດທາດ ແຄນຊຽມ (Ca) ໃນເມັດ ແລ້ວມັນຈະມີຜົນຕໍ່ຄຸນນະພາບ ແລະ ການແຕກງອກຂອງເມັດ, ການຂາດນ້ຳມັນອາດມີຜົນເຮັດໃຫ້ການແຕກງອກຫຼຸດລົງໄດ້ເຖິງ 40%.

- ການໃຫ້ນ້ຳຫຼາຍເກີນໄປມັນກໍ່ມີ ການຂະຫຍາຍຕົວຂອງກິ່ງງ່າຫຼາຍເກີນໄປ ແລະ ກໍ່ຈະເປັນແຫຼ່ງອາຫານຂອງ ພະຍາດ ແລະ ແມງໄມ້ໄດ້ງ່າຍ, ປາຍຮາກ ຫຼື ເຂັມທີ່ແທງລົງດິນຈະອ່ອນແອ່ ແລະ ການສຸກແກ່ຂອງຝັກຈະບໍ່ສະໝ່ຳສະເໝີ.





ຮູບທີ່ 15: ການໃຫ້ນ້ຳຂອງໝາກຖົ່ວດິນ

4.9 ການບົວລະບັດຮັກສາ

- ການກຳຈັດວັດສະພືດແມ່ນມີຄວາມສຳຄັນໃນການຜະລິດເມັດພັນ ຄວນ ກຳຈັດວັດສະພືດດ້ວຍແຮງງານຄົນ ເພາະຕ້ອງການຄວາມລະອຽດ ແລະ ມີຄຸນພາບສູງໂດຍປາດສະຈາກເມັດພັນອື່ນປະປົນ.,
- ການທຳລາຍຂອງສັດຕູພືດເປັນສາຍເຫດນຶ່ງທີ່ເຮັດໃຫ້ຜົນຜະລິດຕ່ຳ ແລ້ວ ຍັງເຮັດໃຫ້ຄຸນນະພາບຂອງເມັດພັນຕ່ຳອີກດ້ວຍ ເຊັ່ນ: ເມັດບໍ່ພັດທະນາເຕັມຝັກ, ເປີເຊັນການສີເມັດຕ່ຳ, ເມັດມີຂະໜາດນ້ອຍ, ເມັດຫົດໂຕ, ສີຂອງເມັດບໍ່ສະໝ່ຳສະເໝີ, ເມັດຖືກທຳລາຍ, ເປີເຊັນການແຕກງອກຕ່ຳ ແລະ ອື່ນໆ, ການປ້ອງກັນກຳຈັດ ພະຍາດ ແລະ ແມງໄມ້ຄວນເຮັດເປັນປົກກະຕິ, ການຕິດຕາມກວດກາແປງຜະລິດເມັດພັນຄວນເຮັດເປັນປົກະຕິ ແລະ ເມື່ອເຫັນການທຳລາຍຂອງພະຍາດ, ແມງໄມ້ ຄວນກຳຈັດທັນທີ.





ຮູບທີ່ 16: ການທຳລາຍຂອງສັດຕູພືດ

4.10 ການຖອນແຍກຕົ້ນທີ່ປະປົນ



ການຖອນແຍກຕົ້ນປະປົນແມ່ນມີຄວາມສຳຄັນຫຼາຍ ເພາະຕົ້ນປົນ 1 ຕົ້ນ ອາດຈະມີເມັດປົນປະມານ 20-40 ເມັດ ເຊິ່ງຈະມີຜົນກະທົບຕໍ່ຄຸນນະພາບຂອງແນວພັດເພາະຄວາມບໍ່ສະໝ່ຳສະເໝີຂອງການຈະເລີນເຕີບໂຕ, ການອອກດອກ, ອາຍຸເກັບກ່ຽວ ແລະ ຜະລິດຫຼຸດລົງ. ການຖອນແຍກຕົ້ນປະປົນຄວນເຮັດຢ່າງໜ້ອຍ 3 ຄັ້ງ ກ່ອນການເກັບກ່ຽວ ເລີ້ມຕັ້ງແຕ່ຕົ້ນອ່ອນ ແມ່ນສັງເກດສີຂອງຕົ້ນຖ້າບໍ່ຄືກັນແມ່ນໃຫ້ຖອນຖິ້ມ, ຕົ້ນທີ່ອ່ອນແອ່, ຕົ້ນທີ່ບິດບ້ຽວມີຮູບຮ່າງແຕກຕ່າງຈາກກຸ່ມຕົ້ນທີ່ຖືກຳພະຍາດທຳລາຍ ໂດຍສະເພາະແມ່ນໄວຣັດ ໄລຍະອອກດ້ອກ ຖ້າກຸ່ມທີ່ອອກດ້ອກໄວ ແລະ ຊ້າເກີນໄປ ສີຂອງດ້ອກທີ່ຕ່າງຈາກໝູ່ ລວມເຖິງຕົ້ນທີ່ເກີດນ້ອກແຖວແມ່ນໃຫ້ຖອນຖີ້ມໝົດ. ໄລຍະເກັບກ່ຽວໃຫ້ຄັດຂະໜາດຂອງຝັກ ລັກຊະນະຂອງຝັກທີ່ບໍ່ຖືກຕາມລັກຊະນະປະຈຳພັນ ແລະ ຝັກທີ່ຖືກພະຍາດແມງໄມ້ທຳລາຍໃຫ້ຄັດແຍກອອກ.



ຮູບທີ່ 17: ການທ□າລາຍຂອງສັດຕູພືດ

4.11 ການເກັບກ່ຽວ

ໄລຍະເວລາໃນການເກັບກ່ຽວແມ່ນມີຄວາມສຳຄັນຕ້ອງໄດ້ເອົາໃຈໃສ່ ເພາະວ່າຖ້າເກັບໄວ ຫຼື ຊ້າເກີນໄປຈະມີຜົນຕໍ່ຄຸນນະພາບເມັດພັນແນ່ນອນ ເພື່ອຫຼີກລ້ຽງບັນຫາດັ່ງກ່າວຄວນສັງເກດດັ່ງນີ້:

- ອີງຕາມອາຍຸເກັບກ່ຽວຕາມລັກຊະນະປະຈຳພັນຂອງແຕ່ລະແນວພັນ
- ສັງເກດເມື່ອອາຍຸສຸກແກ່ໃບຈະເປັນສີເຫຼືອງ
- ຝັກແກ່ຈະມີເສັ້ນຄືດາງແຫ່
- ເມັດຈະແຍກອອກຈາກຝັກ ເມື່ອສັງເກດດ້ານໃນຂອງຝັກຈະກາຍເປັນສີນ້ຳຕານ

ຮູບ 18 ການເກັບກ່ຽວດ້ວຍແຮງງານຄົນ

- ການເກັບກ່ຽວຄວນເກັບເມື່ອຈຳນວນຝັກແກ່ເກີນ 70-75% ຂອງຝັກທັງໝົດ
- ເມື່ອເກັບກ່ຽວແລ້ວຄວນວາງລຽງເປັນແຖວເພື່ອການກວດກາຄັດຕົ້ນທີ່ບໍ່ຄືໝູ່ ຫຼື ຕົ້ນຖືກພະຍາດ ແມງໄມ້ທຳລາຍອອກ.

ຮູບ19 ລັກຊະນະຂອງເມັດ ແລະ ສີດ້ານໃນຂອງຝັກທີ່ສະແດງໃຫ້ຮູ້ວ່າແກ່ພໍທີ່ຈະເກັບກ່ຽວໄດ້




## 4.12 ການຕາກເພື່ອຫຼຸດຄວາມຊຸ່ມ ແລະ ການເກັບຮັກສາ

- ໂດຍປົກກະຕິເມື່ອເກັບກ່ຽວມາໃໝ່ໆຄວາມຊຸ່ມຈະຢູ່ປະມານ 35-60% ເຊິ່ງໃນໄລຍະນີ້ຈະເຮັດໃຫ້ການທຳລາຍຂອງເຊື້ອຣາໄດ້ໄວທີ່ສຸດ ຄວນຈະຫຼຸດຄວາມຊຸ່ມລົງໃຫ້ໄວທີ່ສຸດ ໃຫ້ເຫຼືອປະມານ 18-20% ຖ້າຈະສີດ້ວຍເຄື່ອງຈັກ ແລະ 15% ຖ້າແກະດ້ວຍມື (ແຕ່ສຳລັບເມັດພັນແມ່ນແນະນຳໃຫ້ແກະດ້ວຍມືແມ່ນດີທີ່ສຸດ)
- ຫຼັງຈາກເກັບກ່ຽວມາແລ້ວຄວນຕາກຝັກຖົ່ວດິນໃນບອນຮົ່ມ ແຕ່ມີລົມພັດຜ່ານ ຫຼີກລ້ຽງການຕາກກາງແດດໂດຍກົງ ເພາະຈະເຮັດໃຫ້ເປີເຊັນຄວາມງອກຫຼຸດລົງ.



- ຫຼັງຈາກຄວາມຊຸ່ມຫຼຸດລົງເຫຼືອ ປະມານ 15% ແລ້ວສາມາດເກັບໃນບ່ອນທີ່ມີອາກາດຖ່າຍເຖດີ, ບໍ່ມີຄວາມຊຸ່ມ ແລະ ບໍ່ຖືກແດດຊ່ອງໃສ ດີທີ່ສຸດແມ່ນເກັບຮັກສາໃນຝັກ ບໍ່ຄວນແກະເປັນເມັດ ເພື່ອຫຼີກລ້ຽງການທຳລາຍຂອງພະຍາດແມງໄມ້ ແລະ ຮັກສາເປີເຊັນການງອກ.
- ຖ້າຈະເກັບຮັກສາໃນຮູບຂອງເມັດຄວນຈະເກັບໃນຫ້ອງທີ່ມີອຸນຫະພູມປະມານ 4 ອົງສາເຊ ແລະ ຄວາມຊຸມຫ້ອງຄວນຕ່ຳກວ່າ 50% ແລະ ເມັດຄວນປະສົມຢາກັນເຊື້ອຣາ ເພື່ອການເກັບຮັກສາຄຸນນະພາບຂອງເມັດພັນໃຫ້ຢູ່ໄດ້ດົນ.

ຮູບ 20: ການຕາກແນວພັນໝາກຖົ່ວດິນ

## 5. ການກຳນົດມາດຕະຖານຄຸນນະພາບຂອງເມັດພັນຖົ່ວດິນ

ໂດຍທົ່ວໄປແລ້ວແຕ່ລະປະເທດກໍ່ຈະກຳນົດມາດຕະຖານຂອງເມັດພັນບໍ່ຄືກັນ ເພາະວ່າມັນຂຶ້ນກັບປະເພດຂອງເມັດພັນ ແລະ ຈຸດປະສົງຂອງການນຳໃຊ້ເມັດພັນ ເຊິ່ງສາມາດສະຫຼູບມາດຕະຖານຂອງຕ່າງປະເທດຄື:

| ມາດຖານຂອງແຕ່ລະປະເທດ | ສິ່ງປະປົນ | ປະເພດເມັດພັນ | | | |
|---|---|---|---|---|---|
| | | ລຸ້ນ 1 | ລຸ້ນ 2 | ລຸ້ນ 3 | ລຸ້ນ 4 |
| North Carolina Crop Improvement Association, ປະເທດອາເມລິກາ | ເມັດບໍລິສຸດ (ຕ່ຳສຸດ)<br>ເມັດຫຍ້າປົນ (ສູງສຸດ)<br>ເມັດຫຍ້າຂອງພືດຮ້າຍແຮງ (ສູງສຸດ)<br>ເມັດຂອງພືດອື່ນ (ສູງສຸດ)<br>ເມັດພັນອື່ນ (ສູງສຸດ)<br>ເປີເຊັນຄວາມງອກ (ສູງສຸດ) | 100%<br>0.01%<br>0<br>0%<br>0.04%<br>85% | 98%<br>0.01%<br>0%<br>0.01%<br>0.2%<br>85% | 98%<br>0.01%<br>0%<br>0.02%<br>0.5%<br>85% | 95%<br>0.01%<br>0%<br>0.02%<br>0.5%<br>75% |
| Georgia ປະເທດອາເມລິກາ | ເມັດບໍລິສຸດ (ຕ່ຳສຸດ)<br>ເມັດຫຍ້າຂອງພືດຮ້າຍແຮງ (ສູງສຸດ)<br>ເມັດຂອງພືດອື່ນ (ສູງສຸດ)<br>ເມັດພັນອື່ນ (ສູງສຸດ)<br>ເປີເຊັນຄວາມງອກ (ສູງສຸດ) | 95%<br>0%<br>0%<br>0%<br>75% | 95%<br>0%<br>0.1%<br>0.2%<br>75% | 95%<br>0%<br>0.2%<br>0.2%<br>75% | - |
| ປະເທດອິນເດຍ | ເມັດບໍລິສຸດ (ຕ່ຳສຸດ)<br>ເມັດຫຍ້າຂອງພືດຮ້າຍແຮງ (ສູງສຸດ)<br>ເມັດຂອງພືດອື່ນ (ສູງສຸດ)<br>ເມັດພັນອື່ນ (ສູງສຸດ)<br>ເປີເຊັນຄວາມງອກ (ສູງສຸດ)<br>ເປີເຊັນຄວາມຊຸ່ມ (ສູງສຸດ) | 96%<br>0%<br>0%<br>0.1%<br>70%<br>9% | 96%<br>0%<br>0%<br>0.2%<br>7%<br>9% | | |
| ປະເທດຫວຽດນາມ | ເມັດບໍລິສຸດ (ຕ່ຳສຸດ)<br>ເມັດຫຍ້າ (ສູງສຸດເມັດ/ກລ)<br>ເມັດຂອງພືດອື່ນ (ສູງສຸດ)<br>ເປີເຊັນຄວາມງອກ (ສູງສຸດ)<br>ເປີເຊັນຄວາມຊຸ່ມ (ສູງສຸດ) | 96%<br>0<br>0.1%<br>70%<br>10% | 96%<br>5<br>0.5%<br>70%<br>10% | | |

## 6. ສະຫຼຸບ

ຊາວກະສິກອນຜູ້ທີ່ຈະຜະລິດເມັດພັນຖົ່ວດິນ ຈະຕ້ອງໄດ້ສຶກສາໃຫ້ເຂົ້າໃຈເຖິງຄຸນລັກຊະນະປະຈຳພັນຂອງແນວພັນຖົ່ວດິນທີ່ຕົນເອງຈະປູກເຊັ່ນ: ລັກສະນະຊົງຕົ້ນ, ໃບ, ສີຂອງໃບ, ສີຂອງດອກ, ອາຍຸເກັບກ່ຽວ, ລັກສະນະຂອງຝັກຂອງເມັດ, ຂະໜາດຂອງເມັດ, ສີຂອງເມັດ ແລະ ອື່ນໆ, ຊາວກະສິກອນຕ້ອງກຳນົດວ່າງແຜນຕາຕະລາງການປູກຂອງຕົນເອງເພື່ອໃຫ້ເປັນລະບຽບ ແລະ ສາມາດຕິດຕາມໄດ້ໃນແຕ່ລະໄລຍະຂອງການຜະລິດ, ເພື່ອໃຫ້ໄດ້ເມັດພັນທີ່ມີຄຸນນະພາບຊາວກະສິກອນຄວນເອົາໃຈໃສ່ລົງຕິດຕາມ ບົວລະບັດຮັກສາຖົ່ວດິນເປັນປະຈຳ ໂດຍສະເພາະຕ້ອງເອົາໃຈໃສ່ການຖອນແຍກຕົ້ນທີ່ປະປົນທຸກໆໄລຍະ ແລະ ການຄັດເມັດປົນອອກຫຼັງການເກັບກ່ຽວ ລວມໄປເຖິງການໃສ່ຖົງບັນຈຸ ແລະ ເກັບຮັກສາໃນເລົ້າສາງກໍ່ຕ້ອງໝັ່ນຕິດຕາມເປັນໄລຍະ.